ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຄົມມະນາຄົມຂົນສົ່ງ ເລກທີ 4312/ຄຂປກ

ໄປສະນີ ແລະ ກໍ່ສ້າງ ວັນທີ 11 NOV 2002

# ຂໍ້ກຳນົດ

# ກ່ຽວກັບ ມາດຕະຖານເຕັກນິກ ຍານພາຫະນະ ແລະ ສິ້ນສ່ວນຂອງຍານພາຫະນະທີ່ຈະໄດ້ຮັບອະນຸຍາດໃຫ້ນຳເຂົ້າມາ ຂຶ້ນທະບຽນ ແລະ ປະກອບເປັນຄັນ ເພື່ອນຳໃຊ້ຢູ່ໃນ ສປປລາວ

- ອີງຕາມກົດໝາຍວ່າດ້ວຍການຂົນສົ່ງທາງບົກ;
- ອີງຕາມກົດໝາຍວ່າດ້ວຍການຈະລາຈອນທາງບົກ;
- ອີງຕາມດຳລັດ ເລກທີ 66/ນຍ ລົງວັນທີ 20/05/1999 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນ ໄຫວຂອງກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ;

**ລັດຖະມົນຕີວ່າການກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ອອກຂໍ້ກຳນົດ:**

## ໝວດທີ I

## ຂໍ້ກຳນົດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ກຳນົດສະບັບນີ້ວາງອອກເພື່ອກຳນົດລາຍລະອຽດກ່ຽວກັບສະພາບ ແລະ ມາດຕະຖານເຕັກນິກ ຂອງຍານພາຫະນະທີ່ຈະອະນຸຍາດ ໃຫ້ນຳເຂົ້າມາຂຶ້ນທະບຽນລວມທັງສິ້ນສ່ວນຍານພາຫະນະ ທີ່ອະນຸຍາດໃຫ້ນຳເຂົ້າມາປະກອບເປັນຄັນ ເພື່ອນຳໃຊ້ຢູ່ ສປປລາວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງທັງເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການຄຸ້ມຄອງການນຳເຂົ້າດັ່ງກ່າວໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 2. ຄວາມໝາຍ ຂອງ ຍານພາຫະນະ.**

ຍານພາຫະນະທີ່ລະບຸໄວ້ໃນຂໍ້ກຳນົດສະບັບນີ້ ໝາຍເຖິງຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກຊຶ່ງລວມມີ ລົດຂົນສົ່ງ ແລະ ພາຫະນະກົນຈັກໜັກ ທຸກຂະໜາດ, ທຸກປະເພດ ທີ່ມີໂຄງປະກອບສ້າງຖືກຕ້ອງຕາມມາດຕະຖານເຕັກນິກ ຂອງໂຮງງານທີ່ຜະລິດ, ມີສະພາບ ແລະ ມາດຕະຖານເຕັກນິກ ຕາມທີ່ໄດ້ລະບຸໄວ້ ໃນຂໍ້ກຳນົດສະບັບນີ້.

## ໝວດທີ II

## ສະພາບ ແລະ ມາດຕະຖານເຕັກນິກ ຂອງ ຍານພາຫະນະ ແລະ ຂອງສິ້ນສ່ວນ ຍານພາຫະນະທີ່ຈະໄດ້ຮັບອະນຸຍາດ ໃຫ້ນຳເຂົ້າມາຮັບໃຊ້ ຢູ່ສສປລາວ.

**ມາດຕາ 3 ຄວາມແຮງ ແລະ ຂະໜາດ ຂອງ ຍານພາຫະນະ.**

ຍານພາຫະນະຂົນສົ່ງ ປະເພດຕ່າງໆທີ່ຈະໄດ້ຮັບອະນຸຍາດໃຫ້ນຳເຂົ້າມານຳໃຊ້ຢູ່ ສປປ ລາວ ຕ້ອງມີຄວາມແຮງ ແລະ ຂະໜາດດັ່ງນີ້;

1. ລົດຈັກ 2 ລໍ້ ຄວາມແຮງບໍ່ເກີນ 250 ຊີຊີ,
2. ລົດຈັກ ສາມລໍ້, ຈຳໂບ້ ຄວາມແຮງບໍ່ເກີນ 250 ຊີຊີ, ຕຸກໆຄວາມແຮງບໍ່ເກີນ 650 ຊີຊີ;
3. ລົດເກ່ງ, ລົດກະບະ, ລົດຈິບ, ລົດຕູ້, ລົດບັດ ( ລົດເມ ) ລົດບັນທຸກດ່ຽວ ( Rigid Truck ) ຂະໜາດ ບໍ່ເກີນ 12 ລໍ້, ລົດລາກ (Trailer);ຄວາມຍາວ, ຄວາມສູງ ແລະ ຄວາມກ້ວາງໃຫ້ຖືເອົາ ຕາມມາດຕະຖານເຕັກນິກ ຂອງໂຮງງານທີ່ຜະລິດອອກ ບໍ່ໃຫ້ດັດແປງຢ່າງເດັດຂາດ;
4. ຄວາມກ້ວາງຂອງລົດທຸກປະເພດ ອະນຸຍາດ 2,50 ແມັດ;

**ມາດຕາ 4. ນ້ຳໜັກລວມສູງສຸດ ຂອງ ຍານພາຫະນະຂົນສົ່ງ.**

ຍານພາຫະນະຂົນສົ່ງ ທຸກປະເພດ ທີ່ຈະໄດ້ຮັບອະນຸຍາດໃຫ້ນຳເຂົ້າມານຳໃຊ້ຢູ່ໃນ ສປປລາວ ຕ້ອງຮັບປະກັນ ການບັນທຸກນຳໜັກລວມສູງສຸດ ( ນ້ຳໜັກລົດເປົ່າ + ນ້ຳໜັກບັນທຸກ ) ຕາມຂໍ້ກຳນົດກ່ຽວກັບການອະນຸມັດນ້ຳໜັກລວມສູງສຸດ ສະບັບເລກ ທີ 849/ຄຂປກ, ລົງວັນທີ 05/03/2002 ທີ່ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງວາງອອກ.

**ມາດຕາ 5. ສະພາບ ແລະ ມາດຕະຖານເຕັກນິກ ຂອງ ຍານພາຫະນະ,**

ຍານພາຫະນະຂົນສົ່ງ ທຸກປະເພດທີ່ຈະໄດ້ຮັບອະນຸຍາດໃຫ້ນຳເຂົ້າ ມານຳໃຊ້ຢ່າງ ຖາວອນ ຢູ່ ສປປລາວ ຕ້ອງແມ່ນໄດ້ປະກອບພວງມະໄລຢູ່ເບື້ອງຊ້າຍ.

ສຳລັບຍານພາຫະນະຂົນສົ່ງ ທີ່ໃຊ້ແລ້ວ ທີ່ຈະໄດ້ຮັບອະນຸຍາດໃຫ້ນຳເຂົ້າ ຕ້ອງມີສະພາບ ແລະ ມາດຕະຖານເຕັກນິກຕ່ຳສຸດດັ່ງນີ້; ມີເຕັກນິກຄົບຖ້ວນ ຫຼືບໍ່ມີ ການປ່ຽນແປງລະບົບໂຄງສ້າງເດີມຂອງລົດຕາມທີ່ຜະລິດຈາກໂຮງງານ, ໃຊ້ງານໄດ້ ເປັນປົກກະຕິ, ມີຊາຊີຊີ່, ຕົວບໍ່ບຸ້ມ, ຖັງບໍ່ບ້ຽວ, ມີອຸປະກອນປອງກັນຄວາມປອດໄພ, , ມີຫ້າມລໍ້, ມີຫ້າມລໍ້, ມີໄຟເຍືອງໜ້າ ແລະ ຫຼັງ, ມີໄຟສັນຍານຄົບຊຸດ, ມີແວ່ນສ່ອງ ຫຼັງ, ໄດ້ຜ່ານການໃຊ້ງານມາແລ້ວບໍ່ເກີນ 4 ປີ ນັບແຕ່ປີທີ່ຜະລິດ. ຍັງມີສີສັນສວຍ

ງານ ແລະມີຄຸນນະພາບ ໂດຍລວມ ບໍ່ຕ່ຳກວ່າ 80% ຫຼື ຍານພາຫະນະຂົນສົ່ງ ນັບແຕ່ມື້ຜະລິດຈາກໂຮງງານ ບໍ່ທັນໄດ້ໃຊ້ງານ ຕ່ຳກ່ວາ 6 ປີລົງມາ.

- ຍານພາຫະນະ 4 ລໍ້ ຂຶ້ນໄປແມ່ນໃຫ້ມີສາຍແອວຮັດທຸກໆຄັນ.

ສຳລັບ ຍານພາຫະນະກົນຈັກໜັກ ທີ່ນຳໃຊ້ແລ້ວຕ້ອງມີອາຍຸການນຳໃຊ້ບໍ່ເກີນ 8 ປີຫລື ມີຊົ່ວໂມງນຳໃຊ້ມາແລ້ວ ບໍ່ໃຫ້ເກີນ 20,000 ຊົ່ວໂມງ.

**<u>ຕົວຢ່າງ</u>**: - ຍານພາຫະນະຂົນສົ່ງ ທີ່ໃຊ້ແລ້ວ ທີ່ຈະນຳເຂົ້າໃນປີ 2002 ຕ້ອງແມ່ນໄດ້ຜະລິດອອກໃນປີ 1998

{ ຍານພາຫະນະກົນຈັກໜັກ ທີ່ໃຊ້ແລ້ວ ທີ່ຈະນຳເຂົ້າໃນປີ 2002 ຕ້ອງແມ່ນໄດ້ຜະລິດອອກໃນປີ 1994

**ມາດຕາ 6. ສະພາບ ແລະ ມາດຕະຖານເຕັກນິກ ຂອງສິ້ນສ່ວນຍານພາຫະນະທີ່ຈະນຳເຂົ້າມາປະກອບເປັນຄັນ ແລະ ນຳໃຊ້ຢູ່ພາຍໃນປະເທດ.**

ສິ້ນສ່ວນ ຂອງຍານພາຫະນະ ທີ່ຈະໄດ້ຮັບອະນຸຍາດ ໃຫ້ບັນດາໂຮງງານປະກອບ ພາຫະນະປະເພດຕ່າງໆນຳເຂົ້າມາປະກອບເປັນຄັນ ແລະ ນຳໃຊ້ຢູ່ພາຍໃນປະເທດຕ້ອງມີສະພາບ ແລະ ມາດຕະຖານເຕັກນິກດັ່ງນີ້ :

1. ສິ້ນສ່ວນຍານພາຫະນະທຸກປະເພດທີ່ມາປະກອບຕ້ອງແມ່ນສິ້ນສ່ວນທີ່ໄດ້ມາດຕະຖານຈາກ ໂຮງງານ ແລະ ໄດ້ຮັບການອະນຸຍາດທາງດ້ານເຕັກນິກ ຈາກກະຊວງ ຄຂປກ ສາກ່ອນ.
2. ສຳລັບພ່ວງ ແລະ ຫາງລາກ ຕ້ອງມີໂຄງປະກອບສ້າງຖືກຕ້ອງຕາມມາດຕະຖານເຕັກນິກຂອງໂຮງງານທີ່ຜະລິດ ຊຶ່ງຕ່ຳສຸດ ຕ້ອງມີແໜບ, ມີຫ້າມລໍ້ ແລະ ມີລະບົບໄຟສັນຍານຄົບຊຸດ.
3. ການນຳເຂົ້າສິ້ນສ່ວນຫົວຈັກ ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງ ຄຂປກ.

- ສຳລັບ ບໍລິສັດທີ່ນຳເຂົ້າມາຈຳໜ່າຍ ຕ້ອງສະຫຼຸບລາຍງານລະອຽດ ຫົວຈັກດັ່ງກ່າວເອົາໄປໃສ່ ລົດໝາຍເລກທະບຽນ, ເລກຈັກ, ເລກຖັງ, ພ້ອມນັ້ນໃຫ້ມາຂໍ ໃບອະນຸຍາດນຳ ກະຊວງ ຄຂປກ ຈິ່ງໄປຂຶ້ນທະບຽນໄດ້.
- ສຳລັບບຸກຄົນແມ່ນມີຈຸດປະສົງຢາກນຳເຂົ້າຫົວຈັກມາປ່ຽນຖ່າຍ ກໍ່ບອກໝາຍເລກທະບຽນຂອງຕົນເອງມາເຊັ່ນດຽວກັນ.

## ໝວດທີ III

## ການກວດກາເຕັກນິກຍານພາຫະນະ
## ແລະ ສິ້ນສ່ວນຍານພາຫະນະທີ່ນຳເຂົ້າ, ຍານພາຫະນະທີ່ປະກອບ
## ຫຼື ຟື້ນຟູໃໝ່ ຢູ່ໃນໂຮງງານ ພາຍໃນປະເທດ

**ມາດຕາ 7 ການກວດກາ ສະພາບ ແລະ ມາດຕະຖານ ເຕັກນິກຍານພາຫະນະ ແລະ ສິ້ນສ່ວນຍານພາຫະນະທີ່ນຳເຂົ້າ**

ການກວດກາ ສະພາບ ແລະ ມາດຕະຖານ ເຕັກນິກຍານພາຫະນະ ແລະ ສິ້ນສ່ວນຍານພາຫະນະທີ່ນຳເຂົ້າ ແມ່ນຕ້ອງປະຕິບັດ ໃຫ້ສອດຄ່ອງ ຕາມເນື້ອໃນຂອງຂໍ້ກຳນົດສະບັບນີ້ ແລະຕ້ອງດຳເນີນຕາມຂັ້ນຕອນດັ່ງນີ້:

1. ກວດກາໃນເວລານຳເຂົ້າຢູ່ດ່ານຊາຍແດນໂດຍແມ່ນພະນັກງານວິຊາການຂອງພະແນກ ຄຂປກ ກວດກາຕົວຈິງພ້ອມທັງເຊັນຢັ້ງຢືນຄວາມຖືກຕ້ອງຕາມໃບອະນຸຍາດທາງດ້ານເຕັກນິກນຳ ພາຫະນະ ກົນຈັກ ເຂົ້າ ແລະ ຂຶ້ນທະບຽນ ຢູ່ ສປປ ລາວ ຂອງກົມຂົນສົ່ງ ກະຊວງ ຄຂປກ.
2. ກວດກາໃນເວລາກ່ອນຈະຂຶ້ນທະບຽນປ້າຍໃຫ້ຍານພາຫະນະ ໂດຍແມ່ນພະນັກງານວິຊາການຂອງ ພະແນກ ຄຂປກ ຫຼື ກອງຄຸ້ມຄອງພາຫະນະ ແລະ ການຂັບຂີ່ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ເປັນຜູ້ກວດຄວາມຖືກຕ້ອງຕື່ມ.

**ມາດຕາ 8. ການກວດກາຄຸນນະພາບຂອງຍານພາຫະນະທີ່ປະກອບໃນໂຮງງານພາຍໃນປະເທດ**

ຍານພາຫະນະທີ່ປະກອບ ຫຼື ຟື້ນຟູຄືນໃໝ່ຈາກໂຮງງານພາຍໃນປະເທດ ເມື່ອ ສຳເລັດແລ້ວ ໂຮງງານຕ້ອງຢັ້ງຢືນຄຸນນະພາບ (QC) ຂອງຍານພາຫະນະ ແລະກະຊວງ ຄຂປກ ກວດກາຢັ້ງຢືນໃຫ້ກ່ອນການຂຶ້ນທະບຽນ.

ໃນກໍລະນີທີ່ຍານພາຫະນະຄັນໃດຄັນໜຶ່ງ ບໍ່ສາມາດຜ່ານການກວດກາໄດ້ຕາມກຳນົດ ໝາຍເຕັກນິກ ໃນຄັ້ງທີ່ໜຶ່ງ ກໍຈະໄດ້ຮັບອະນຸຍາດ ໃຫ້ສ້ອມແປງ ແລະແກ້ໄຂ ສິ່ງທີ່ບົກຜ່ອງ ແລ້ວໃຫ້ທຳການກວດກາເຕັກນິກຄືນໃໝ່ ເປັນຄັ້ງທີ່ສອງ ຊຶ່ງຖືເປັນຄັ້ງສຸດທ້າຍ. ຫາກວ່າຜ່ານການກວດກາຄັ້ງນີ້ຍັງບໍ່ໄດ້ຕາມກຳນົດໝາຍເຕັກນິກອີກກໍຈະໃຫ້ຢຸດການສ້ອມແປງ ຫຼື ແກ້ໄຂອີກ ແລະ ບໍ່ອານຸຍາດ ໃຫ້ນຳໃຊ້ ພາຫະນະຄັນດັ່ງກ່າວຕໍ່ໄປອີກໃຫ້ຍຸບເປັນເສດເຫຼັກ.

## ໝວດທີ IV

## ຂໍ້ເກືອດຫ້າມ

**ມາດຕາ 9: ຂໍ້ເກືອດຫ້າມກ່ຽວກັບການນຳເຂົ້າຍານພາຫະນະ ແລະ ສິ້ນສ່ວນຍານພາຫະນະ**

ຫ້າມບຸກຄົນ ຫຼື ການຈັດຕັ້ງມີການກະທຳ ດັ່ງຕໍ່ໄປນີ້ ຢ່າງເດັດຂາດ:

1. ທຳການນຳເຂົ້າຍານພາຫະນະ ຫຼື ສິ້ນສ່ວນຍານພາຫະນະ ທຸກປະເພດ ໂດຍບໍ່ໄດ້ຮັບອະນຸຍາດ:
2. ແຈ້ງຂໍ້ມູນຍານພາຫະນະ ຫຼື ສິ້ນສ່ວນຍານພາຫະນະ ທີ່ໄດ້ຮັບອະນຸຍາດ ໃຫ້ນຳເຂົ້າ ໂດຍບໍ່ຖືກຕ້ອງກັບສະພາບຕົວຈິງ ທັງທາງດ້ານຈຳນວນ ຫຼື ສະພາບ ມາດຕະຖານເຕັກນິກ ແລະ ໂດຍບໍ່ຖືກຕ້ອງຕາມລະບຽບການນຳເຂົ້າ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 3,4,5,6 ແລະ 7 ຂອງຂໍ້ກຳນົດສະບັບນີ້.

**ມາດຕາ 10 ຂໍ້ເກືອດຫ້າມ ກ່ຽວກັບການຂຶ້ນທະບຽນ ການນຳໃຊ້ ຍານພາຫະນະ.**

ຫ້າມພະນັກງານ,ລັດຖະກອນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ຂຶ້ນທະບຽນໃຫ້ນຳໃຊ້ຢ່າງເດັດຂາດ ຍານພາຫະນະທີ່ນຳເຂົ້າ ໂດຍບໍ່ຖືກຕ້ອງ ຕາມລະບຽບກົດໝາຍ ແລະ ຍານພາຫະນະທີ່ປະກອບ ຫຼື ຟື້ນຟູໃຫມ່ ຈາກໂຮງງານພາຍໃນປະເທດ. ຊຶ່ງບໍ່ສາມາດຜ່ານການກວດກາໄດ້ ຕາມມາດຕະຖານ ຫຼື ກຳນົດໝາຍເຕັກນິກ ດ້ານຄຸນນະພາບ (QC) ຕາມ່ທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 9 ຂອງຂໍ້ກຳນົດສະບັບນີ້ ຫຼື ຕາມລະບຽບການທີ່ກະຊວງ ຄຂປກ ວາງອອກ.

## ໝວດທີ V

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 11 ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ທຳການນຳເຂົ້າ ພາຫະນະ ແລະ ສິ້ນສ່ວນຍານພາຫະນະ ຢ່າງຖືກຕ້ອງຕາມສະພາບ ແລະ ມາດຕະຖານເຕັກນິກ ລວມທັງຜູ້ທີ່ໄດ້ທຳການປະກອບ ຫຼື ຟື້ນຟູຄືນໃໝ່ ພາຫະນະປະເພດຕ່າງໆ ຢ່າງມີປະສິດທິພາບຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມທີ່ໄດ້ບັນຍັດໄວ້ໃນກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງ.

**ມາດຕາ 12 ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ລະເມີດຂໍ້ໃດໜຶ່ງ ຂອງຂໍ້ກຳນົດສະບັບນີ້ ຈະຖືກປັບໃໝ ຫຼື ຖືກລົງໂທດທາງອາຍາ ແລະ ອາດຈະຖືກມາດຕະການ ໂທດເພີ່ມອີກ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 13 ມາດຕະການປັບໃໝ ແລະ ມາດຕະການໂທດເພີ່ມ.**

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ຂໍ້ໃດໜຶ່ງຂອງຂໍກຳນົດສະບັບນີ້ ຈະຖືກປັບໃໝ ແລະ ຖືກ ປະຕິບັດ ມາດຕະການໂທດເພີ່ມເຊັ່ນ:

1. ແຈ້ງຂໍ້ມູນທາງດ້ານເອກະສານຂອງຍານພາຫະນະ ຫຼື ສິ້ນສ່ວນ ຍານພາຫະນະ ທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າ ສປປລາວ ໂດຍບໍ່ຖືກຕ້ອງ ຕາມຈຳນວນ ຫຼື ສະພາບ ແລະ ມາດຕະຖານເຕັກນິກ. ຕົວຈິງ ຈະຖືກປັບໃໝສອງເທົ່າ ຂອງມູນຄ່າພາສີ-ອາກອນ ແລະ ຕ້ອງປະຕິບັດຕາມລະບຽບພາສີຕ່າງໆ ຢ່າງຄົບຖ້ວນ ຈຶ່ງຈະສາມາດນຳເອົາເຂົ້າໄດ້ ແຕ່ພາຍໃຕ້ເງື່ອນໄຂທີ່ວ່າ ຍານພາຫະນະແລະ ສິ້ນສ່ວນຍານພາຫະນະນັ້ນ ບໍ່ລື່ນກາຍຈຳນວນ ແລະ ບໍ່ຂັດຕໍ່ສະພາບ ແລະ ມາດຕະຖານເຕັກນິກ ທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າ. ແຕ່ຫາກວ່າມີບາງສ່ວນລື່ນກາຍຈຳນວນ ແລະ ຂັດຕໍ່ສະພາບ ຫຼື ມາດຕະຖານເຕັກນິກ ທີ່ໄດ້ຮັບອະນຸຍາດ ຫຼື ທີ່ໄດ້ກຳນົດໄວ້ ກໍຈະບໍ່ອະນຸຍາດໃຫ້ນຳສ່ວນນັ້ນ ເຂົ້າຢ່າງເດັດຂາດ.
2. ນຳເອົາພາຫະນະທີ່ປະກອບ ຫຼື ຟື້ນຟູໃໝ່ ຈາກໂຮງງານພາຍໃນປະເທດທີ່ບໍ່ສາມາດຜ່ານການກວດກາໄດ້ຕາມກຳນົດໝາຍເຕັກນິກໃນຄັ້ງທີ່ສອງ ຫຼື ໃນຄັ້ງສຸດທ້າຍ ໄປຈົດທະບຽນນຳໃຊ້ຈະຖືກປັບໃໝສອງເທົ່າ ຂອງມູນຄ່າຍານພາຫະນະນັ້ນ ແລະ ບໍ່ຂຶ້ນທະບຽນໃຫ້ນຳໃຊ້ຢ່າງເດັດຂາດ.
3. ນຳເອົາຍານພາຫະນະ ຫລື ສິ້ນສ່ວນຍານພາຫະນະເຂົ້າປະເທດໂດຍບໍ່ຜ່ານດ່ານພາສີຊາຍແດນຈະຖືກຍຶດໄວ້ເພື່ອດຳເນີນຄະດີຕາມກົດໝາຍ.

**ມາດຕາ 14. ມາດຕະການທາງອາຍາ.**

ຈະຖືກລົງໂທດທາງອາຍາບຸກຄົນໃດຫາກໄດ້ມີການກະທຳຜິດດັ່ງຕໍ່ໄປນີ້:

- ລັກລອບນຳເຂົ້າ ຍ້ານພາຫະນະ ຫລື ສິ້ນສ່ວນຍານພາຫະນະ;
- ປະກອບເອກະສານເທັດ, ປອມແປງເອກະສານ, ນຳໃຊ້ເອກະສານປອມກ່ຽວກັບການນຳເຂົ້າຍານພາຫະນະ ຫຼື ສິ້ນສ່ວນຍານພາຫະນະ;
- ນຳເອົາຍານພາຫະນະທີ່ປະກອບ ຫລື ຟື້ນຟູໃໝ່ຈາກໂຮງງານທີ່ບໍ່ສາມາດຜ່ານການກວດກາໄດ້ຕາມກຳນົດໝາຍເຕັກນິກໃນຄັ້ງສຸດທ້າຍໄປຈົດທະບຽນນຳໃຊ້.

ພະນັກງານ ຫລື ລັດຖະກອນຜູ້ໃດຫາກໄດ້ຮັບສິນບົນ. ໃຊ້ອຳນາດເກີນຂອບເຂດ, ປອມແປງເອກະສານ, ສວຍໃຊ້ຕຳແໜ່ງໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ ກ່ຽວ

ກັບການນຳເຂົ້າຍານພາຫະນະ, ສິ້ນສ່ວນຍານພາຫະນະ ຫລື ການຂື້ນທະບຽນຍານພາຫະນະກໍຈະຖືກປະຕິບັດວິໄນ ຕາມລະບຽບລັດຖະກອນຢ່າງເຂັ້ມງວດ ແລະ ຖືກດຳເນີນຄະດີຕາມກົດໝາຍອາຍາ.

## ໝວດທີ VI
## ຂໍ້ກຳນົດສຸດທ້າຍ

**ມາດຕາ 15. ການຈັດຕັ້ງປະຕິບັດ.**

- ກົມຂົນສົ່ງ ມີໜ້າທີ່ລົງຊຸກຍູ້, ແນະນຳ, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ ຢ່າງເປັນປົກກະຕິ ແລະ ໃກ້ຊິດ.
- ພະແນກ ຄຂປກ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ມີໜ້າທີ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ

**ມາດຕາ 16. ຜົນບັງຄັບໃຊ້.**

ຂໍ້ກຳນົດສະບັບນີ້ມີຜົນບັງຄັບໃຊ້ກັບທຸກຍານພາຫະນະ ແລະ ສິ້ນສ່ວນຍານພາຫະນະທີ່ໄດ້ຮັບ ອະນຸຍາດນຳເຂົ້າ ສປປລາວ ນັບແຕ່ວັນທີ 01/12/2002 ເປັນຕົ້ນໄປ ບັນດາຂໍ້ກຳນົດ ແລະລະບຽບການທີ່ຂັດກັບຂໍ້ການົດສະບັບນີ້ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການ

ບົວທອງ ວົງລໍຄຳ